# ສະຫະພັນ ສາກົນ ເພື່ອ ສິດທິ ມະນຸດ (FIDH)
# ຂະບວນ ການ ລາວ ເພື່ອ ສິດທິ ມະນຸດ (ຂລສມ)

ຖະແລງ ການ ຮ່ວມ

ສປປ ລາວ : ຜູ້ ໃຫ້ ການ ຊ່ວຍ ເຫລືອ ຕອ້ງ ພັກດັນ ໃຫ້ ລັຖະບານ ສປປ ລາວ ແກ້ໄຂ ບັນຫາ ສິດທິ ມະນຸດ

ປາຣີ , 14 ພືສະຈິກາ 2014 – ''ຕ່າງ ປະເທດ ທີ່ ໃຫ້ ການ ຊ່ວຍເຫລືອ ຄວນ ຈະ ທົບທວນ ຄືນ ເຖີງ ເງື່ອນໄຂ ຂອງ ການ ຊວ່ຍເຫລືອ ໂດຍ ຮຽກຮອ້ງ ໃຫ້ ທາງການ ສປປ ລາວ ແກ້ໄຂ ບັນຫາ ໂດຍ ແທ້ຈີງ'', ສະຫະພັນ ສາກົນ ເພື່ອ ສິດທິ ມະນຸດ ແລະ ຂະບວນການ ລາວ ເພື່ອ ສິດທິ ມະນຸດ ໃດ້ ກ່າວ ໃນ ສານ ສະບັບ ລົງ ວັນທີ່ 13 ພືສະຈິກາ 2014 ສົ່ງ ເຖີງ ບັນດາ ນັກ ການ ທູດ ແລະ ອົງການ ທີ່ ໃຫ້ ການ ຊວ່ຍເຫລືອ ທີ່ ນະຄອນ ວຽງຈັນ.

ໃນ ວັນທີ່ 14 ພືສະຈິກາ 2014, ທາງການ ສປປ ລາວ ແລະ ຄະນະ ຕ່າງ ປະເທດ ທີ່ ໃຫ້ ການ ຊວ່ຍເຫລືອ ມີ ໝາຍ ກຳນົດ ເຂົ້າ ຮ່ວມ ກອງ ປະຊຸມ ໂຕະມົນ ທີ່ ນະຄອນ ຫລວງ ວຽງຈັນ ຊື່ງ ມີ ເປົ້າໝາຍ ທົບທວນ ເຖີງ ການ ດຳເນີນ ນະໂຍບາຍ ການ ພັທະນາ ສັງຄົມ ແລະ ເສຖກິດ ແຫ່ງ ຊາດ ສະບັບ ທີ່ 7, ຕລອດ ເຖີງ ບັນຫາ ອື່ນໆ ທີ່ ຍົບຍົກ ຂຶ້ນ ມາ ສົນທະນາ ໃນ ໂອກາດ ກອງປະຊຸມ ໂຕະມົນ ເມື່ອ ປີ ທີ່ ຜານ ມາ, ຄັ້ງ ເດືອນ ພືສະຈິກາ 2013. ກອງ ປະຊຸມ ໃນ ມື້ ນີ້ ຍັງ ຈະ ເປັນ ໂອກາດ ໃຫ້ ທັງ ສອງ ຝ່າຍ ໃດ້ ແລກປ່ຽນ ຂໍ້ມູນ ແລະ ຄວາມຄິດ ຄວາມເຫັນ ກ່ຽວກັບ ຍຸທະຊາດ ແລະ ແຜນການ ພັທະນາ.

ເມື່ອ ບໍ່ ເທົ່າ ໃດ ປີ ທີ່ ຜ່ານ ມາ, ການ ຊວ່ຍເຫລືອ ການ ພັທະນາ (Official Development Assistance-ODA) ໃຫ້ ສປປ ລາວ ໃດ້ ເພີ້ມ ຂື້ນ ຢ່າງ ຕໍ່ເນື່ອງ, ເຖີງ 23% ຈາກ 630 ລ້ານ ໂດລາ ສະຫະຣັດ ໃນ ປີ 2012-2013. ແຕ່ ໜ້າ ເສັຽດາຍ ທີ່ ຄວາມ ປາຖນາ ຂອງ ຜູ້ ໃຫ້ ການ ຊວ່ຍເຫລືອ ຢາກ ໃຫ້ ຊີວິດ ການ ເປັນຢູ່ ຂອງ ປະຊາຊົນ ລາວ ດີ ຂື້ນ, ບໍ່ ໃດ້ ຮັບ ຄວາມ ປາຖນາ ດີ ດັ່ງ ດຽວ ກັນ ຈາກ ທາງການ ສປປ ລາວ ໃນ ການ ຢາກ ຕັ້ງໃຈ ສົ່ງເສີມ ແລະ ປົກປອ້ງ ສິດທິ ພື້ນຖານ ຂອງ ປະຊາຊົນ, ນີ້ ຄື ຄຳ ເວົ້າ ໃນ ຈົດໝາຍ ຂອງ ສະຫາພັນ ສາກົນ ເພື່ອ ສິດທິ ມະນຸດ ແລະ ຂະບວນ ການ ລາວ ເພື່ອ ສິດທິ ມະນຸດ.

'' ໃນ ສປປ ລາວ ຊັບ ສົມບັດ ຈາກ ການ ຊວ່ຍເຫລືອ ຕ່າງ ປະເທດ ບໍ່ ໃດ້ ນຳພາ ໃຫ້ ຊື່ງ ການ ນັບຖື ສິດທິ ມະນຸດ ແຕ່ ປະການ ໃດ. ເຖີງ ເວລາ ແລ້ວ ທີ່ ຜູ້ ໃຫ້ ການ ຊວ່ຍເຫລືອ ຈະຕອ້ງ ວາງ ເງື່ອນໄຂ ພັກດັນ ໃຫ້ ລັຖະບານ ສປປ ລາວ ນັບຖື ສິດທິ ມະນຸດ '' ທ່ານ ກາຣີມ ລາຮິດຈີ, ປະທານ ສະຫະພັນ ສາກົນ ເພື່ອ ສິດທິ ມະນຸດ ໃດ້ ກ່າວ.

ຄວາມ ລົ້ມເຫລວ ຂອງ ລັຖະບານ ສປປ ລາວ ໃນ ການ ສືບສ່ວນ ຢ່າງ ຄັກແນ່ ແລະ ແກ້ໄຂ ບັນຫາ ກໍຣະນີ ຫາຍ ສາບສູນ . ເຊັ່ນ ກໍຣະນີ ທ່ານ ສົມບັດ ສົມພອນ ຍັງ ຄົງ ເປັນ ບັນຫາ ໃຫຍ່ ອັນ ໜ້າ ວິຕົກ ກັງວົນ. ຍີ່ງ ໄປ ກວ່າ ນີ້ ກົດໝາຍ ໃໝ່ ທີ່ ຖືກ ລົງ ມະຕິ ເມື່ອ ບໍ່ ນານ ມາ ນີ້, ເພີ້ມ ກັບ ກົດໝາຍ ສະບັບ ກອ່ນ, ຍິ່ງ ມີ ແຕ່ ຈຳກັດ ສິດທິ ພົລະເຮືອນ ແລະ ສິດທິ ການເມືອງ ຂອງ ປະຊາຊົນ. ກົດ ລະບຽບ ໃໝ່ ສເນີ ໂດຍ ທາງການ ສປປ ລາວ, ຖ້າ ຜ່ານ ການ ລົງ ມະຕິ, ກໍ່ ຈະ ສ້າງ ຜົນ ກະທົບ ທາງ ລົບ ໃຫ້ ແກ່ ປະຊາຊົນ ລາວ ແລະ ອົງການ ນາງ ຊາດ ໃນ ລາວ ທີ່ ບໍ່ ຂື້ນ ນຳ ລັຖະບານ (International Non-Government Organizations -INGOs) ພອ້ມ ທັງ ສະມາຄົມ ໃນ ລາວ ຊື່ງ ບໍ່ ສແວງ ຫາ ຣາຍໃດ້ (Non-Profit Associations - NPAs).

ສະຫະພັນ ສາກົນ ເພື່ອ ສິດທິ ມະນຸດ ແລະ ຂະບວນ ການ ລາວ ເພື່ອ ສິດທິ ມະນຸດ ຮຽກຮອ້ງ ຕໍ່ ນາງ ຊາດ ທີ່ ໃຫ້ ການ ຊວ່ຍເຫລືອ ລາວ ໃຫ້ ທົບທວນ ເບີ່ງ ຄືນ ໃໝ່ ເຖີງ ເງື່ອນໄຂ ຂອງ ການ ຊວ່ຍເຫລືອ ເວັ້ນ ເສັຽ ແຕ່

ວ່າ ທາງການ ສປປ ລາວ ຍອມ ພະຍາຍາມ ປະຕິບັດ ໃຫ້ ມີ ການ ຄືບໜ້າ , ເຊັ່ນ : ເປີດ ເຜີຍ ຂໍ້ມູນ ທີ່ ຈະ ເຮັດ ສາມາດ ຮູ້ ເຖິງ ຊາຕາກັມ ຂອງ ທ່ານ ສົມບັດ ສົມພອນ ແລະ ຜູ້ ຫາຍ ສາບສູນ ອື່ນໆ ອີກ.

'' ການ ຊ່ວຍເຫລືອ ຈາກ ນາງ ຊາດ ແມ່ນ ປຽບ ເໝືອນ ບໍ່ ທັນໃຈ ທີ່ ຂາດ ບໍ່ ໄດ້ ສໍາລັບ ລັຖະບານ ສປປ ລາວ. ສນັ້ນ, ຜູ້ ໃຫ້ ການ ຊ່ວຍເຫລືອ ຈະ ຕອ້ງ ກ້າ ປະເຊີນ ໜ້າ ກັບ ຄວາມ ຈິງ ຂອງ ການ ລະເມີດ ສິດທິ ມະນຸດ ຢ່າງ ນັກໜ່ວງ ໃນ ສປປ ລາວ ແລະ ຈະ ຕອ້ງ ຊອກ ຊອ່ງ ທາງ ແກ້ໄຂ ບໍ່ ໃຫ້ ມີ ການ ລະເມີດ ແບບ ນີ້ ຕໍ່ ໄປ ອີກ ໃດ້. ຫາກ ນາງ ຊາດ ຫລີງ ພິດພາດ ບໍ່ ຂໍ ໃຫ້ ສປປ ລາວ ແກ້ໄຂ ບັນຫາ ການ ລະເມີດ ສິດທິ ມະນຸດ ກໍ່ ຈະ ເທົ່າ ກັນ ກັບ ວ່າ ນາງ ຊາດ ເປັນ ໃຈ ສົ້ມຮູ້ ຮວ່ມ ຄິດ ໃນ ການ ລ່ວງ ລະເມີດ ສິດທິ ມະນຸດ ໃນ ລາວ ນັ້ນ ເອງ'' ຍານາງ ອະນິດາ ເທພສູວັນ ປະທານ ຂະບວນ ການ ລາວ ເພື່ອ ສິດທິ ມະນຸດ ໄດ້ ກ່າວ.

Press contacts
Andrea Giorgetta (English) - Tel: +66 88 611 7722 (Bangkok)
Arthur Manet (French, English, Spanish) - Tel: +33 6 72 28 42 94 (Paris)
Audrey Couprie (French, English, Spanish) - Tel: +33 6 48 05 91 57 (Paris)